# ກຳມະບານກະຊວງຍຸຕິທຳ ຈັດຕັ້ງເຜີຍແຜ່ລະບຽບ
# ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ສົ່ງເສີມການນຳໃຊ້ເງິນກີບ





ຕອນແລງຂອງວັນທີ 10 ກຸມພາ ຜ່ານມານີ້ ສະຫະພັນກຳມະບານກະຊວງຍຸຕິທຳ ໄດ້ຈັດຕັ້ງປາຖະກະຖາວັນສ້າງຕັ້ງສະຫະພັນກຳມະບານຄົບຮອບ 56 ປີ ແລະ ເຜີຍແຜ່ລະບຽບການຄຸ້ມຄອງເງິນຕາຕ່າງປະເທດ ແລະ ສົ່ງເສີມການນຳໃຊ້ເງິນກີບ ຂຶ້ນທີ່ຫ້ອງປະຊຸມກະຊວງຍຸຕິທຳ ໂດຍການໃຫ້ກຽດເປັນປະທານຂອງທ່ານ ດຣ ຈະເລີນ ເຢຍປາວເຮີ ກຳມະການສູນກາງພັກ, ເລຂາຄະນະພັກ, ລັດຖະມົນຕີວ່າການກະຊວງຍຸຕິທຳ ພ້ອມນີ້ກໍມີການເຂົ້າຮ່ວມຂອງທ່ານ ພູທອນ ແກ້ວດວງມະນີ ຄະນະພັກກະຊວງ, ປະທານສະຫະພັນກຳມະບານກະຊວງຍຸຕິທຳ, ຫົວໜ້າຫ້ອງການກະຊວງຍຸຕິທຳ, ພະນັກງານຈາກທະນາຄານແຫ່ງ ສປປ ລາວ ແລະ ສະມາຊິກກຳມະບານກະຊວງຍຸຕິທຳເຂົ້າຮ່ວມ 100 ກວ່າຄົນ.

ໃນກອງປະຊຸມ ທ່ານ ນາງ ວິນຄຳ ລຸນທອນ ຫົວໜ້າພະແນກຄຸ້ມຄອງເງິນຕາຕ່າງປະເທດ ກົມນະໂຍບາຍເງິນຕາ ທະນາຄານແຫ່ງ ສປປ ລາວ ກໍໄດ້ຜ່ານລະບຽບການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມການນຳໃຊ້ເງິນກີບ ພ້ອມນັ້ນກໍໄດ້ມີການປະກອບຄຳຄິດຄຳເຫັນກ່ຽວກັບລະບຽບດັ່ງກ່າວ ແລະ ມີການຊັກຖາມ-ຕອບຢ່າງເປັນຂະບວນຟົດຟື້ນ.

ຈາກນັ້ນທ່ານ ດຣ ຈະເລີນ ເຢຍປາວເຮີ ກໍໄດ້ຍ້ອງຍໍຊົມເຊີຍທີ່ທະນາຄານແຫ່ງ ສປປ ລາວ ໄດ້ຕັ້ງໜ້າໃນການຈັດຕັ້ງປະຕິບັດເຜີຍແຜ່ລະບຽບການຄຸ້ມຄອງເງິນຕາຕ່າງປະເທດ ແລະ ສົ່ງເສີມການນຳໃຊ້ເງິນກີບ ພ້ອມທັງຮຽກຮ້ອງໃຫ້ສະມາຊິກກຳມະບານທົ່ວກະຊວງຍຸຕິທຳ ກໍຄືພະນັກງານທັງໝົດ ແລະ ພໍ່ແມ່ປະຊາຊົນທຸກຖ້ວນໜ້າຈົ່ງພ້ອມກັນສືບຕໍ່ຈັດຕັ້ງປະຕິບັດຕໍ່ໄປ.

ໃນໂອກາດດັ່ງກ່າວນັ້ນ ຜູ້ຕາງໜ້າທະນາຄານແຫ່ງ ສປປ ລາວ ກໍໄດ້ມອບກະຕ່າດອກໄມ້ອວຍພອນແດ່ຄະນະພັກ-ຄະນະນຳກະຊວງຍຸຕິທຳ ຈົ່ງມີພາລະນາໄມສົມບູນ ແລະ ໄດ້ມອບເງິນຈຳນວນ 5 ລ້ານກີບ ໃຫ້ແກ່ສະຫະພັນກຳມະບານກະຊວງຍຸຕິທຳ ເພື່ອເປັນການສະໜັບສະໜູນກອງປະຊຸມໃນຄັ້ງນີ້.